ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ພິທີສະເຫຼີມສະຫຼອງວັນແມ່ຍິງສາກົນ 08 ມີນາ ຄົບຮອບ 116 ປີ



ໃນຕອນບ່າຍຂອງວັນທີ 3 ມີນາ 2026 ທີ່ທະນາຄານແຫ່ງ ສປປ ລາວ (ທຫລ), ສະຫະພັນແມ່ຍິງ ທຫລ ໄດ້ຈັດພິທີປາຖະກະຖາ ທວນຄືນປະຫວັດຄວາມເປັນມາຂອງວັນແມ່ຍິງສາກົນ, ວັນທີ 8 ມີນາ 2026 ຄົບຮອບ 116 ປີ ໂດຍການໃຫ້ກຽດປາຖະກະຖາເລົ່າທວນຄືນປະຫວັດຄວາມເປັນມາຂອງວັນແມ່ຍິງສາກົນ ຄົບຮອບ 116 ປີ ໂດຍ ທ່ານ ນາງ ທຳມາ ເຜັດວິໄຊ ຮອງປະທານຄະນະບໍລິຫານງານ ສູນກາງສະຫະພັນແມ່ຍິງລາວ, ພິທີປາຖະກະຖາໃນຄັ້ງນີ້ ໄດ້ເປັນກຽດຕ້ອນຮັບການເຂົ້າຮ່ວມຂອງທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ອົງການຈັດຕັ້ງຊາວໜຸ່ມ ແລະ ກຳມະບານ ທຫລ, ຄະນະຮາກຖານ, ຄະນະໜ່ວຍ ແລະ ຜູ້ຕາງໜ້າຈາກບັນດາສະຫະພັນແມ່ຍິງຮາກຖານທີ່ຂຶ້ນກັບ ສະຫະພັນແມ່ຍິງ ທຫລ ກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ພິທີປາຖະກະຖາໃນຄັ້ງນີ້ ຈັດຂຶ້ນ ເພື່ອເປັນການສ້າງຂະບວນຂໍ່ານັບຮັບຕ້ອນ ແລະ ສະເຫຼີມສະຫຼອງວັນແມ່ຍິງສາກົນວັນທີ ຄົບຮອບ 116 ປີ (08 ມີນາ 1910 – 08 ມີນາ 2026) ໃຫ້ມີເນື້ອໃນເລິກເຊິ່ງ ແລະ ເຕັມໄປດ້ວຍບັນຍາກາດທີ່ຟົດຟື້ນ.

ໃນພິທີ ຜູ້ເຂົ້າຮ່ວມຍັງໄດ້ຮັບຟັງການ ສະຫຼຸບລາຍງານການເຄື່ອນໄຫວ ຂອງສະຫະພັນແມ່ຍິງ ທຫລ ປະຈຳປີ 2025 ແລະ ທິດທາງແຜນການເຄື່ອນໄຫວໃນປີ 2026 ໂດຍຫຍໍ້ ທີ່ສະເໜີໂດຍທ່ານ ນ. ຟອງຈິນດາ ແສງສຸລິວົງ ປະທານສະຫະພັນແມ່ຍິງ ທຫລ, ຮັບຊົມວິດີໂອເປີດໂຕ ແພັດຟອມ ກຸ່ມຊື້-ຂາຍສິນຄ້າຂອງສາມອົງການຈັດຕັ້ງມະຫາຊົນ ແລະ ໃນຕອນທ້າຍ ພິທີຍັງໄດ້ຮັບຟັງຄຳເຫັນໂອ້ລົມຈາກ ທ່ານ ຮອງຜູ້ວ່າການ ທຫລ ເພື່ອເປັນເຂັມຊີ້ທິດເຍືອງທາງໃນການເຄື່ອນໄຫວວຽກງານຂອງສະຫະພັນແມ່ຍິງ ທຫລ ໃນຕໍ່ໜ້າ.




ຈາກນັ້ນ, ທ່ານ ຮອງຜູ້ວ່າການ ທຫລ ພ້ອມດ້ວຍແຂກທີ່ເຂົ້າພິທີ ຍັງໄດ້ເຂົ້າຮ່ວມຢ້ຽມຊົມງານຕະຫຼາດນັດວາງສະແດງ, ຜະລິດຕະພັນຂອງບັນດາໜ່ວຍແມ່ຍິງ ເນື່ອງໃນໂອກາດວັນແມ່ຍິງສາກົນ ຄົບຮອບ 116 ປີ ທີ່ຈັດຂຶ້ນຢູ່ ທຫລ ໂດຍ ສະຫະພັນແມ່ຍິງຮາກຖານ ທຫລ ຊຶ່ງພາຍໃນງານປະກອບດ້ວຍຮ້ານຂາຍເຄື່ອງຈຳນວນຫຼາຍກ່ວາ 20 ຮ້ານ ທີ່ວາງຈຳໜ່າຍສິນຄ້າອຸປະໂພກ, ບໍລິໂພກຫຼາຍຮູບແບບແຕກຕ່າງກັນ ເຮັດໃຫ້ພາຍໃນງານ ມີບັນຍາກາດທີ່ຟົດຟື້ນ ແລະ ເຕັມໄປດ້ວຍເນື້ອໃນທີ່ເລິກເຊິ່ງຍິ່ງຂຶ້ນ.




ພ້ອມດຽວກັນນັ້ນ, ໃນຕອນແລງຂອງວັນດຽວກັນ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະບໍລິຫານງານ ສມຍ.ທຫລ ໄດ້ນຳພາຜູ້ເຂົ້າຮ່ວມງານສືບຕໍ່ເຂົ້າຮ່ວມຂະບວນການເຕັ້ນແອໂຣບິກ ເພື່ອສຸຂະພາບ ພ້ອມທັງເປັນການຕ້ອນຮັບພິທີສະເຫຼີມສະຫຼອງວັນແມ່ຍິງສາກົນ 08 ມີນາ ຄົບຮອບ 116 ປີ ທີ່ຈະໝູນວຽນມາເຖິງອີກບໍ່ພໍເທົ່າໃດວັນຂ້າງໜ້ານີ້.





ພາບ ແລະ ຂ່າວ: ຫ້ອງການ ທະນາຄານແຫ່ງ ສປປ ລາວ

ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ